ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 021 /ພກພ
ນະຄອນຫຼວງວຽງຈັນ, ວັນທີ: 04 ມີນາ 2026

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ);
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ການແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ I ປີ 2026 (BOD I).

- ອີງຕາມຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ຄັ້ງທີ I ປີ 2026 ເຊິ່ງໄດ້ຈັດຂຶ້ນໃນວັນທີ 04 ມີນາ 2026, ເວລາ 09:00 ໂມງ ທີ່ຊັ້ນ 3 ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ປອ ສີທອງ ພິມມະຈິດ ພ້ອມດ້ວຍສະມາຊິກສະພາບໍລິຫານ ດັ່ງນີ້:

1. ທ່ານ ປອ ສີທອງ ພິມມະຈິດ : ປະທານສະພາບໍລິຫານ
2. ທ່ານ ສີທາ ພິມມະຈິດ : ຮອງປະທານສະພາບໍລິຫານ
3. ທ່ານ ແພງ ດວງເງິນ : ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
4. ທ່ານ ນັນທະລັດ ທິລະກຸມ : ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
5. ທ່ານ ນາງ ໄຮທອງ ພິມມະຈິດ : ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການໃຫຍ່ຝ່າຍບັນຊີການເງິນ
6. ທ່ານ ພູມສະຫວັນ ສຸນັນທອງ : ສະມາຊິກສະພາບໍລິຫານ / ຮອງຜູ້ອຳນວຍການຝ່າຍພັດທະນາທຸລະກິດ
7. ທ່ານ ພຸດທະເສນ ພິມມີໄຊ : ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ

ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເຫັນດີເປັນເອກະພາບກັນດັ່ງນີ້:

1 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

1. ຮັບຮອງເອົາບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນ ປະຈຳປີ 2025 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
2. ຮັບຮອງການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2025 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງເອົາ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
4. ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸບເປີ໌ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2026 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
5. ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2026-2028 ໃຫ້ນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ;
6. ກຳນົດເອົາວັນທີ 20 ມີນາ 2026 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025;
7. ກຳນົດວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 29 ເມສາ 2026, ເວລາ 09:00 ໂມງ ໂດຍຈັດທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ;
8. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025, ມີລາຍລະອຽດດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024;
ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນ ປະຈຳປີ 2025 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;
ວາລະທີ 3: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລຫຼັງອາກອນ ແລະ ບໍ່ຈ່າຍເງິນປັນຜົນ ປະຈຳປີ 2025;
ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026;
ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2026;
ວາລະທີ 6: ພິຈາລະນາ ແລະ ຮັບຮອງອາຍຸການສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2026-2028.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ປອ ສີທອງ ພິມມະຈິດ